ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 813 /ຫຄຊກລ.ຄພ
ນະຄອນຫລວງວຽງຈັນ, ວັນທີ 21 ກັນຍາ 2023.

## ບົດລາຍງານ

## ຜົນຂອງການລົງຕິດຕາມກວດກາ ການເຄື່ອນໄຫວວຽກງານປະຕິບັດງານ ຂອງອົງການ ເກັບກູ້ລະເບີດ ຮາໂລ ທຣັສທ໌ (Halo Trust) ປະຈຳ ແຂວງສະຫວັນນະເຂດ.

### I. ພາກສະເໜີ.

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 727/ຫຄຊກລ.ບທ. ລົງວັນ 31 ສິງຫາ 2023 ວ່າດ້ວຍ ການແຕ່ງຕັ້ງ ໜ່ວຍງານຄຸ້ມຄອງຄຸນນະພາບ ລົງຕິດຕາມ ການປະຕິບັດງານ ຂອງອົງການ ຮາໂລ ທຣັສທ໌ (Halo) ປະຈຳແຂວງສະຫວັນນະເຂດ, ທີ່ເຄື່ອນໄຫວດຳເນີນງານຕາມບົດບັນທຶກຄວາມເຂົ້າໃຈ ແລະ ປະຕິບັດຕາມມາດຕະຖານການປະຕິບັດງານ (SOP) ມີເມືອງອາດສະພັງທອງ, ພະລານໄຊ, ເຊໂປນ, ພີນ ແລະ ນອງ ແຂວງສະຫ້ວນນະເຂດ, ເລີ່ມແຕ່ວັນທີ່ 06 ຫາ 15 ກັນຍາ 2023. ໃນການກວດກາຄັ້ງນີ້ທີມງານກວດກາຄຸນນະພາບຫ້ອງການ ຄຊກລ ແລະ ພະນັກງານ ຄຄກລ ແຂວງສະຫ້ວນນະເຂດ ເຂົ້າຮ່ວມຄະນະກວດກາ ມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ວິໄລສັກ ວົງຊາຍະຈັນ, ຫົວໜ້າໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
2. ທ່ານ ພູວົງ ສີສະໜັກ, ວິຊາການຄຸ້ມຄອງຄຸນນະພາບ/ຂັບລົດຫ້ອງການ ຄຊກລ;
3. ທ່ານ ວົງແສງ ສີສຸລິດ, ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
4. ທ່ານ ເຂັມພອນ ພະສີວົງມີໄຊ, ແພດປະຈຳໜ່ວຍງານຫ້ອງການ ຄຊກລ;
5. ທ່ານ ຄຳພູວົງ ຊະນະມິນຕີ, ຫ້ອງການ ຄຄກລ ແຂວງສະຫ້ວນນະເຂດ;
6. ທ່ານ ສະກຸນສັບ ເສນາມຸນຕີ, ຄຄກລ ແຂວງສະຫ້ວນນະເຂດ;

**ພາກສ່ວນອົງການຮາໂລ ທຣັສທ໌ (Halo).**

1. ທ່ານ ນາງ ເອັມມີລີ່ ເດວິດ - ຮອງຫົວໜ້າໂຄງການ;
2. ທ່ານ ໂທມັດສ ຄັອບຕັນ - ຊຽວຊານຝ່າຍປະຕິບັດງານ;
3. ທ່ານ ພັນທະ ກິຊຸນຄຳ - ຫົວໜ້າຝ່າຍປະຕິບັດງານ;
4. ທ່ານ ພູວັນ ເກດທະສອນ - ຮອງຝ່າຍປະຕິບັດງານ;
5. ທ່ານ ບຸນນ້ອຍ ພົມມະວົງ - ຫົວໜ້າພາກປະຕິບັດງານ;
6. ທ່ານ ດາວວັນດອນ ຄຸດໄພທູນ - ຮອງຫົວໜ້າປະຕິບັດງານ;
7. ທ່ານ ສຸລິຍາ ອ້ອນທຸມພອນ - ຮອງຫົວໜ້າປະຕິບັດງານ;

### II. ຈຸດປະສົງ.

ເພື່ອຕິດຕາມ ກວດກາການປະຕິບັດງານ ແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການ, ການບໍລິຫານຄຸ້ມຄອງບັນຊາ ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການປະຕິບັດເກັບກູ້, ທຳລາຍ ລບຕ ໃຫ້ມີ

ປະສິດທິພາບສູງ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ປັບປຸງການປະຕິບັດງານ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນ ແລະ ຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

## III. ການເຄື່ອນໄຫວຂອງຄະນະກວດກາ.

ຄະນະກວດກາຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບຜູ້ຊີ້ນຳຝ່າຍປະຕິບັດງານພາກສະໜາມ, ວິຊາການທຳລາຍລະເບີດຂັ້ນສູງ (SEOD4) ແລະ ຊ່ຽວຊານຕ່າງປະເທດ ຜູ້ຮັບຜິດຊອບວຽກງານພາກສະໜາມ ຂອງອົງການ ຮາໂລ ທຣສທ໌, ເພື່ອລົງຕິດຕາມກວດກາການເຄື່ອນໄຫວຈັດຕັ້ງປະຕິບັດ ການຢັ້ງຢືນ ແລະ ຄວບຄຸມຄຸນນະພາບ (QA,QC) ວຽກງານສຳຫຼວດ, ກວດກູ້, ທຳລາຍລະເບີດ ແລະ ສະໜາມກວດກູ້ສຳເລັດແລ້ວ ຢູ່ພາກສະໜາມທີ່ໄດ້ກຳນົດໃນແຜນປະຈຳປີ.

**ພາກສ່ວນຫ້ອງການ.**

ຫ້ອງການ ອົງການເກັບກູ້ ຮາໂລ ທຣສທ໌ (Halo Trust) ປະຈຳ ເມືອງເຊໂປນ ແຂວງສະຫວັນນະເຂດ ປະຈຸບັນມີພະນັກງານທັງໝົດ 1.213 ຄົນ, ພາກສ່ວນຫ້ອງການມີ 96 ຄົນ, ຍິງ 38 ຄົນ, ພາກສ່ວນສະໜາມປະກອບມີ ຫົວໜ້າໜ່ວຍງານ (Team Leader) 96 ຄົນ, ຍິງ 49 ຄົນ ວິຊາການລາວ (Number of SEOD) 01 ຄົນ ຊາຍ, ນັກເກັບກູ້ (Deminers) 725 ຄົນ, ຍິງ 394 ຄົນ, ນັກສຳຫຼວດ (Surveyors) 35 ຄົນ, ຍິງ 13 ຄົນ, ແພດ (Medics) 206 ຄົນ, ຍິງ 109 ຄົນ, ໂຄສະນາສຶກສາຊຸມຊົນ (MRE Staff) 10 ຄົນ, ຍິງ 06 ຄົນ, ພະນັກງານຂັບລົດ (Drivers) 97 ຄົນ, ຍິງ 14 ຄົນ, ຮັກສາຄວາມປອດໄພ 6 ຄົນ ຊາຍ, ອານາໄມ 06 ຄົນ, ທີ່ປຶກສາດ້ານເຕັກນິກ 06 ຄົນ, ຍິງ 02 ຄົນ ແລະ ຊ່ຽວຊານຕ່າງປະເທດມີ 06 ຄົນ, ເຄື່ອນໄຫວວຽກງານສຳຫຼວດ, ກວດກູ້ ແລະ ທຳລາຍລະເບີດຢູ່ 09 ເມືອງຄື: ເມືອງເຊໂປນ, ຊົນບູລີ, ທ່າປາງທອງ, ນອງ, ພີນ, ວິລະບູລີ, ພະລານໄຊ,ອາດສະພັງທອງ ແລະ ເມືອງອາດສະພອນ, ໃນແຜນແມ່ນເຮັດຕາມບົດບັນທຶກຄວາມເຂົ້າໃຈ (MOU) 2022 ຫາ 2023.

**ບັນດາໜ້າວຽກທີ່ອົງການເກັບກູ້ ຮາໂລ ທຣສທ໌ (Halo Trust) ປະຈຳ ເມືອງເຊໂປນ ແຂວງສະຫວັນນະເຂດ ປະຕິບັດໄດ້ແຕ່ເດືອນທີ່ 1 ຫາ 9 ມີຄື:**

- ວຽກງານສຳຫຼວດດ້ານວິຊາການ (TS) ສຳຫຼວດ ຢູ່ 09 ເມືອງ, ໄດ້ 43 ບ້ານ, ກຳນົດເປັນພື້ນທີ່ມີຄວາມອັນຕະລາຍໄດ້ 24 CHA, ມີເນື້ອທີ່ສຳຫຼວດ 3,450.000 ຕາແມັດ, ເນື້ອທີ່ CHA 732,311 ຕາແມັດ, ສຳຫຼວດພົບປະເພດລະເບີດບົມບີ້ 250 ໜ່ວຍ, ສຳພາວຸດອື່ນໆໄດ້ 38 ລູກ.
- ວຽກງານກວດກູ້ປົດປ່ອຍເນື້ອທີ່ດິນ (AC) ລົງກວດກູ້ຕາມ CHA 07 ເມືອງ, ໄດ້ 66 ບ້ານ, ສາມາດກວດກູ້ໄດ້ 192 ສະໜາມ, ໄດ້ເນື້ອທີ່ 5,893,625 ຕາແມັດ, ທຳລາຍລະເບີດປະເພດບົມບີ້ຈຳນວນ 4,457 ໜ່ວຍ, ສຳພາວຸດອື່ນໆໄດ້ 4,077 ລູກ, ຜູ້ໄດ້ຮັບຜົນປະໂຫຍດລວມທັງໝົດ 11,412 ຄົນ.
- ວຽກງານທຳລາຍລະເບີດເຄື່ອນທີ່ (RV) ໄດ້ຈັດຕັ້ງປະຕິບັດຢູ່ 14 ເມືອງ, ຈຳນວນບ້ານ 194 ບ້ານ, ທຳລາຍຕາມການລາຍງານຂອງປະຊາຊົນລາຍລະອຽດດັ່ງນີ້ຄື ປະເພດບົມບີ້ 1,241 ໜ່ວຍ, ບົມໃຫ່ຍ 11 ໜ່ວຍ, ສຳພາວຸດອື່ນໆໄດ້ 856 ລູກ ຜູ້ໄດ້ຮັບຜົນປະໂຫຍດ 4,614 ຄົນ.
- ໂຄສະນາສຶກສາຊຸມຊົນ (MRE) ໂຄສະນາ 11 ເມືອງ, ຈຳນວນບ້ານ 312 ບ້ານ, ໄດ້ລົງໂຄສະນາ 810 ເທື່ອ ແລະ ມີປະຊາຊົນເຂົ້າຮ່ວມ 105,037 ຄົນ, ຊາຍ 52,547 ຄົນ ແລະ ຍິງ 52,490 ຄົນ.

## IV. ຕິດຕາມກວດກາ QA,QC ພາກສະໜາມ.

- ລົງຢ້ຽມຢາມສະໜາມທີ່ກຳລັງກວດກູ້ ບ້ານຕຳລວງ ເມືອງນອງ ທີມງານ CL-50, CL-51 ມີພະນັກງານທັງໝົດລວມ 02 ທີມ 25 ຄົນ, ປະກອບມີຫົວໜ້າທີມງານ 02 ຄົນ, ຮອງທີມ 02 ຄົນ, ພະນັກງານເກັບກູ້+ເຮັດວຽກ

ຖາງປ່າ 16 ຄົນ, ແພດ 04 ຄົນ ແລະໂຊເຟີລົດ 01 ຄົນ ພ້ອມຮັບຜິດຊອບຍາມຈຸດບັນຊາເຝົ້າເຄື່ອງ, ສະໜາມດັ່ງກ່າວມີເນື້ອທີ່ທັງໝົດ 42,506 $ມ^2$ ກວດກູ້ໄດ້ 9,773 $ມ^2$ ສ່ວນເນື້ອທີ່ຍັງເຫຼືອແມ່ນທີມງານຈະກວດກູ້ໃຫ້ສຳເລັດຕາມແຜນ ວັນທີ່ເລີ່ມຕົ້ນ 08/08/2023 ຄາດວ່າຈະສຳເລັດໃນວັນທີ່ 26/12/2023, ເປັນພື້ນທີ່ດິນກະສິກຳ ພົບລູກລະເບີດບົມບີ້ຈຳນວນ 01 ໜ່ວຍ, ສຳພາວຸດອື່ນໆ 34 ລູກ, ນຳໃຊ້ເຄື່ອງກວດ (LLD, Mine Lap Fo3 & Vallon). ຜູ້ທີ່ໄດ້ຮັບຜົນປະໂຫຍດ 01 ຄອບຄົວ, ຈຳນວນຄົນໄດ້ຮັບຜົນປະໂຫຍດ 05 ຄົນ, ຍິງຈຳນວນ 01 ຄົນ. ພ້ອມນີ້ຍັງໄດ້ຕິດຕາມການຝຶກຊ້ອມແຜນຮັບມືກັບອຸປະເຫດຂອງແພດປະຈຳສະໜາມ, ຕິດຕາມເຕັກນິກການຊ່ວຍຊີບຜູ້ຖືກບາດເຈັບ ແລະ ຂັ້ນຕອນການເຄືອນຍ້າຍຄົນເຈັບຈາກຈຸດເກີດເຫດ ໄປຫາຈຸດປະຖົມພະຍາບານທີ່ປອດໄພ ຈົນໄປເຖິງຂັ້ນຕອນເອົາຄົນເຈັບຂຶ້ນພາຫະນະຮັບສົ່ງ.

- ລົງຢ້ຽມຢາມ ສະໜາມສຳຫຼວດດ້ານວິຊາການ (TS), 02 ທີມ ຄື: SV1, SV2 ບ້ານປະໂຕ່ຍໃຫຍ່ ເມືອງນອງ ແຂວງສະຫວັນນະເຂດ, ລະຫັດໜ້າວຽກ 1306049 ສຳລັບທີມ SV2 ມີຈຳນວນພະນັກງານ 11 ຄົນ, ຫົວໜ້າທີມ 01, ຮອງທີມ 01, ນັກເກັບກູ້ແພດ 02, ນັກເກັບກູ້ 06 ແລະ ໂຊເຟີລົດ 01 ຄົນ. ວັນທີ່ເລີ່ມຕົ້ນ 02/09/2023, ແມ່ນໄດ້ສາຫຼວດ 02 ທີມ, ເນື່ອງຈາກວ່າ ທີມ SV1 ບໍ່ສາມາດເຂົ້າໄປສຳຫຼວດສະໜາມຂອງ SV1 ເພາະວ່ານ້ຳຖ້ວມທາງເຂົ້າໄປບໍ່ໄດ້ ຈິ່ງເຂົ້າມາສຳຫຼວດນຳກັນໃນມື້ເລີ່ມຕົ້ນນັ້ນ. ວິທີການສຳຫຼວດ, ແມ່ນບໍ່ໃຫ້ຫຼຸດ 70% ຂອງບັອກ 50 x 50, ແບ່ງອອກເປັນ 02 ຈຸງານສາຫຼວດ, ຈຸງານໜຶ່ງ 04 ຄົນ ແບ່ງອອກເປັນ 04 ທິດ ໂດຍແມ່ນ ຫົວໜ້າທີມຢືນຢູ່ຈຸດໃຈກາງຂອງບັອກ ນັກສຳຫຼວດຜູ້ທີ 01 ແມ່ນເລີ່ມແຕ່ມຸມ 45 ອົງສາ, ຜູ້ທີ 02 ເລີ່ມແຕ່ມຸມ 135 ອົງສາ, ຜູ້ທີ 03 ເລີ່ມແຕ່ມຸມ 225 ອົງສາຜູ້ທີ 04 ເລີ່ມແຕ່ມຸມ 135 ອົງສາ,ເຊິ່ງເລີ່ມຕົ້ນຈາກແຈຂອງບັອກດ້ານນອກເຂົ້າຫາແຈໃຈກາງຂອງບັອກ. ແຕ່02-11/09/2023 ສາມາດສຳຫຼວດໄດ້ 11 ບັອກ, ພົບລະເບີດ 02 ໜ່ວຍຄື: Blu 26, Blu 24 ຜູ້ໄດ້ຮັບຜົນປະໂຫຍດ ແມ່ນ 01 ຄອບຄົວ. ນອກຈາກນີ້ບາງມື້ຍັງໄດ້ອອກໄປທຳລາຍ ແລະ ຝຶກຕຶກແຮງປະຕິບັດວຽກບໍ່ໄດ້.
- ຕິດຕາມ ເບິ່ງການທຳລາຍລະເບີດຢູ່ສະໜາມທີ່ກຳລັງກວດກູ້ ບ້ານຊອງຄັນຄາກ ເມືອງນອງ ທີມງານ CL 20, CL 21 ໄດ້ທຳລາຍເບີດ ບົມບີ້ ຈຳນວນ 03 ໜ່ວຍ ທີ່ກວດພົບໃນສະໜາມທີ່ກຳລັງກວກກູ້ ຈະຕ້ອງໄດ້ທຳລາຍໃນທ້າຍຊົ່ວໂມງເລີກວຽກໃນແຕ່ລະມື້, ຜ່ານການທຳລາຍເຫັນວ່າຫົວທີມ CL 20, CL 21 ແມ່ນໄດ້ປະຕິບັດຖືກຕ້ອງຕາມຂັ້ນຕອນຂອງເຕັກນິກການທຳລາຍລະເບີດ ແລະ ເຫັນວ່າມີຄວາມປອດໄພດີ.
- ລົງຕິດຕາມກວດກາຄວບຄຸມຄຸນນະພາບສະໜາມກວດກູ້ທີ່ສຳເລັດແລ້ວຈຳນວນ 10 ສະໜາມຄື : 05 ເມືອງ09 ບ້ານ, ລາຍລະອຽດມີດັ່ງນີ້ :

1. ເມືອງ ອາດສະພັງທອງ ບ້ານສະພັງແກ້ວ 01 ສະໜາມ ແລະ ບ້ານໜອງປາກຊອງ 01 ສະໜາມ
   - Task ID: HALO-AC-2023-1303021-011, S= 41,292 m2, QC= 1,250 m2 (25 m x 25 m) x 2 Boxs,
   - Task ID: HALO-AC-2022-1303020-003, S= 46,661 m2, QC= 1,650 m2 (25 m x 40 m) x 1 Box, (25 m x 25 m) x 1 Box;
2. ເມືອງ ພະລານໄຊ, ບ້ານ ໂພນຕານ 01 ສະໜາມ
   - Task ID: HALO-AC-2022-1315041-001, S= 53,106 m2, QC= 1,250 m2 (25 m x 25 m) x 2 Boxes
3. ເມືອງ ພີນ, ບ້ານ ພີນ 02 ສະໜາມ ແລະ ບ້ານ ໂນນໄຊ 01 ສະໜາມ

- ການເຄື່ອນໄຫວອອຽກງານກວດກູ້ຂອງທີມງານແມ່ນເຮັດການທຳລາຍໄປພ້ອມກັນໃນກໍລະນີທີ່ກວດພົບລະເບີດທີ່ບໍ່ສາມາດເຄື່ອນຍ້າຍໄດ້ແມ່ນຈະໄດ້ເຮັດການທຳລາຍໃນມື້ນັ້ນເລີຍ.
- ພາຍຫຼັງສຳເລັດການເກັບກູ້ໃນບັອກໃດໜຶ່ງຫົວໜ້າທີມຈະໄດ້ກວດກາຄຸນນະພາບໃນບັອກດັ່ງກ່າວ 100%ເມື່ອສຳເລັດ, ຖ້າກວດກູ້ສະໜາມທັງໝົດສຳເລັດແມ່ນວິຊາການຂັ້ນ 4 ຈະລົງກວດກາຄຸນນະພາບ 2% ອີກເທື່ອໜຶ່ງຈຶ່ງສາມາດເຮັດໃບມອບຮັບເນື້ອທີ່ດິນດັ່ງກ່າວໃຫ້ເຈົ້າຂອງໄປນຳໃຊ້ໄດ້.

## VI. ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ແກ້ໄຂ.

ຜ່ານການຕິດຕາມກວດກາຂອງທີມງານກວດກາຄຸນນະພາບພາຍນອກສະຫຼຸບໄດ້ວ່າ:

1. ການຄວບຄຸມບັນຊາສະຖານທີ່ເກີດອຸປະຕິເຫດໃນສະໜາມ ຂອງຫົວໜ້າທີມແມ່ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.
2. ສະເໜີໃຫ້ຍ້າຍຂຸມຝັງເສດເຫຼັກ ອອກຈາກໃຈກາງສະໜາມກວດກູ້.
3. ສະເໜີໃຫ້ຕັດອອກອຸປະກອນການເກັບກູ້ທີ່ບໍ່ຈຳເປັນ: ຟອຍປັດ ແລະ ໄມ້ແທກເປົ້າໝາຍສັນຍານເຄື່ອງກວດ.
4. ສະເໜີໃຫ້ເພີ່ມໄມໂຄຣໂຟນ ໃຫ້ແກ່ຈຸດຍາມ ຂອງການທຳລາຍ (ໃນກໍລະນີທຳລາຍບົມໃຫຍ່).

ໂດຍລວມແລ້ວ ອົງການເກັບກູ້ລະເບີດ ຮາໂລ ທຣສທ໌ ( Halo Trust ) ປະຈຳ ເມືອງເຊໂປນ ແຂວງສະຫວັນນະເຂດ ໃນການປະຕິບັດວຽກງານການເກັບກູ້ຢູ່ພາກສະໜາມເຫັນວ່າ; ມີຄຸນນະພາບດີ, ມີປະສິດທິພາບ, ມີຄວາມປອດໄພ ແລະ ການເຄື່ອນໄຫວອອຽກງານແມ່ນອີງໃສ່ມາດຖານການປະຕິບັດງານ SOP ຂອງອົງການ, ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.

ສະນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ**

ດວງສີ ທຳມະວົງ

**ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ**